ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສໍາພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ຄະນະບໍລິຫານງານຊາວໜຸ່ມ ທຫລ ຮ່ວມກັບ ສຊປລ ໃຫ້ຄວາມຮູ້ກ່ຽວກັບສະຖານະພາບທາງດ້ານການເງິນ




ໃນລະຫວ່າງວັນທີ 3 -13 ມີນາ 2026, ຄະນະບໍລິຫານງານຊາວໜຸ່ມ ທະນາຄານແຫ່ງ ສປປ ລາວ (ທຫລ) ຮ່ວມກັບ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ (ສຊປລ) ໄດ້ຈັດກິດຈະກຳລົງໃຫ້ຄວາມຮູ້ກ່ຽວກັບບັນຫາໄພເງິນເຟີ້, ການປ້ອງກັນຕົນເອງຈາກການຕົວະຍົວະຫຼອກລວງທາງດ້ານການເງິນ ຢູ່ບັນດາສະຖານການສຶກສາ ຄື: ສະຖາບັນຮັດຕະບໍລິຫານທຸລະກິດ, ຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດ, ມສ ລາວ-ຫວຽດ ແລະ ມສ ວຽງຈັນ; ໃນການເຄື່ອນໄຫວວຽກງານໃຫ້ຄວາມຮູ້ໃນຄັ້ງນີ້ ສະຫາຍ ຈິດຕະກອນ ຈິດຕະພົງ ຮອງເລຂາ ຄະນະບໍລິຫານງານຊາວໜຸ່ມ ທຫລ, ຮອງຫົວໜ້າກົມນະໂຍບາຍເງິນຕາ ທຫລ ໄດ້ນຳພາສະມາຊິກຊາວໜຸ່ມ ທຫລ ເຂົ້າປະກອບສ່ວນຢ່າງຕັ້ງໜ້າ; ສ່ວນຕາງໜ້ານຳພາຈາກ ສຊປລ  ແມ່ນ ສະຫາຍ ບຸນຄູນ ສີມາຍາ ຮອງປະທານກວດກາໜ່ວຍພັກ, ຫົວໜ້າພະແນກກວດກາຊາວໜຸ່ມເຍົາວະຊົນ, ກົມກວດກາ ສຊປລ; ນອກຈາກນີ້, ຍັງມີບັນດາສະມາຊິກຊາວໜຸ່ມຂອງທັງສອງພາກສ່ວນປະກອບສ່ວນ ຢ່າງພ້ອມພຽງ.

ຈຸດປະສົງຂອງການຈັດກິດຈະກຳໃຫ້ຄວາມຮູ້ທາງດ້ານການເງິນ, ການປົກປ້ອງຕົນເອງຈາກການຖືກຫຼອກລວງທາງດ້ານການເງິນ ແລະ ເຜີຍແຜ່ກົດລະບຽບຊາວໜຸ່ມ ໃນຄັ້ງນີ້ ກໍ່ເພື່ອໃຫ້ນັກຮຽນ, ນັກສຶກສາ ພາຍໃນສະຖານການສຶກສາຂອງທັງ 5 ພາກສ່ວນ ຈຳນວນຫຼາຍກວ່າ 825 ຄົນ ໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ ກ່ຽວກັບ ປັດໄຈຕົ້ນຕໍຕ່າງໆທີ່ເປັນສາເຫດຂອງໄພເງິນເຟີ້ ເພື່ອໃຫ້ເຫັນໄດ້ຄວາມສຳຄັນຂອງບັນຫາດັ່ງກ່າວທີ່ກະທົບຕໍ່ເສດຖະກິດ, ການປົກປ້ອງຕົນເອງຈາກການຖືກຫຼອກຫຼວງທາງດ້ານການເງິນ ເພື່ອບໍ່ໃຫ້ຊາວໜຸ່ມ-ໄວໜຸ່ມ ຕ້ອງຕົກເປັນເຫຍື່ອຂອງການຖືກຕົວະຍົວະຫຼອກລວງທາງດ້ານການເງິນ.

ການຈັດກິດຈະກຳ ໃນຄັ້ງນີ້ ໄດ້ສຳເລັດລົງຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້ ຊຶ່ງສະແດງໃຫ້ເຫັນຜ່ານການ ເອົາໃຈໃສ່ຮັບຟັງຂອງບັນດານັກຮຽນ-ນັກສຶກສາ, ການປຶກສາຫາລື ແລກປ່ຽນບົດຮຽນ, ການຖາມ-ຕອບ ແລະ ສາມາດຕີລາຄາໄດ້ວ່າບັນດາເປົ້າໝາຍເຜີຍແຜ່ແມ່ນມີຄວາມຮັບຮູ້ ແລະ ຄວາມເຂົ້າໃຈເນື້ອໃນຜ່ານການບັນຍາຍໃນລະດັບດີເທົ່າທີ່ຄວນ.




**ຂ່າວ - ພາບ: ຫ້ອງການ ທຫລ**

# ຢູ່ເມືອງລາວໃຊ້ເງິນກີບລາວ